ໂຄງການເຄືອຂ່າຍຂໍ້ມູນທີ່ດິນ
ແລະ ຊັບພະຍາກອນທຳມະຊາດ

Rights-LINK

# ການຊົດເຊີຍຄ່າເສຍຫາຍຈາກການຖົມດິນ ແລະ ນ້ຳຖ້ວມນາຂອງປະຊາຊົນ



ບໍລິເວນໂຄງການກໍ່ສ້າງໄຟຟ້ານ້ຳຕົກນ້ຳເທີນ ເຂດບ້ານ
ຈອມແກ້ວ, ເມືອງຍົມມະລາດ,ແຂວງຄຳມ່ວນ

ຂຽນໂດຍ: ມະນີວອນ

*ເພີ່ມທະວີການນຳໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທຳມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.*

http://www.rightslinklao.org

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

VILLAGE FOCUS
INTERNATIONAL

ໂຄງການ ເຄືອຂ່າຍຂໍ້ມູນ ທີ່ດິນ

Rights-LINK


| | |
|---|---|
| ລິຂະສິດໃນການຈັດພິມ | ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ (Rights- LINK Lao Project) ແລະ ອົງການບ້ານຈຸດສຸມສາກົນ (VFI) |
| ຂຽນໂດຍ | ທ່ານ ມະນີວອນ |
| ຮູບ | |
| ຜູ້ກວດແກ້ ແລະ ຮຽບຮຽງພາສາ | ທ່ານ ຫນູພັນ ມະຫາພົນ ແລະ ທ່ານ ນາງ ຄຳຫລ້າ ພຸດທະລາດ |
| ຈັດພິມຄັ້ງທີ່ | |
| ສະໜັບສະໜູນການຈັດພິມໂດຍ | ອົງການເອັດສ໌ດີຊີ |
| ຈັດພິມທີ່ | |
| ທະບຽນພິມເລກທີ | |


**ສະຫງວນລິຂະສິດ**

# ບົດນຳ

ການຊົດເຊີຍໝາຍເຖິງການທົດແທນຄ່າເສຍຫາຍເປັນເງິນ ຫຼື ວັດຖຸສຳລັບຊັບສິນທີ່ຖືກຜົນກະທົບຈາກການກໍ່ສ້າງຂອງໂຄງການໃດໜຶ່ງບໍ່ວ່າ ຈະເປັນຜົນກະທົບທາງກົງ ຫຼື ທາງອ້ອມກໍຕາມດ້ວຍມູນຄ່າ

ປຸ່ງນແທນ 1. ໂຄງການກໍ່ສ້າງໄຟຟ້ານ້ຳຕົກນ້ຳເທີນ 2 ກໍເປັນໂຄງການໜຶ່ງທີ່ເປັນໂຄງການບູລິມະສິດຂອງ ລັດຖະບານໃນການພັດທະນາປະເທດຊາດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃນເຂດໂຄງການ. ເພື່ອຮັບປະກັນການພັດທະນາທ້ອງຖິ່ນ ແລະ ຮັບປະກັນສິດຂອງປະຊາຊົນໃນພື້ນທີ່ໂຄງການ, ໂຄງການກໍ່ສ້າງໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ສ້າງຕັ້ງໜ່ວຍງານທີ່ດິນຊຶ່ງມີໜ້າທີ່ໃນການສຳຫຼວດເຂດທີ່ຖືກຜົນກະທົບ ແລະ ເຂດຍົກຍ້າຍຈັດສັນປະຊາຊົນ. ນອກນີ້,ຍັງມີໜ້າທີ່ໃນການຄິດໄລ່ທົດແທນຄ່າເສຍຫາຍທີ່ໄດ້ຮັບຜົນກະທົບຈາກໂຄງການ. ສິ່ງທີ່ໄດ້ຮັບການທົດແທນຄ່າເສຍຫາຍສ່ວນຫຼາຍມີຊັບສິນ (ສິ່ງກໍ່ສ້າງ, ຜົນລະປູກ ແລະ ຊັບຄົງທີ່ອື່ນໆ) ທີ່ຖືກກະທົບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງສຳລັບທີ່ດິນກະສິກຳ ແລະ ທີ່ດິນຢູ່ອາໄສ ບໍລິສັດຕ້ອງໄດ້ທົດແທນຄ່າເສຍຫາຍໂດຍການທົດແທນຄືນດ້ວຍດິນຕາມຂະໜາດ. ການປຸ່ງນແທນຍັງສາມາດຕົກລົງກັນໄດ້ລະຫວ່າງຜູ້ໄດ້ຮັບຜົນກະທົບ ແລະ ຜູ້ກໍ່ຄວາມເສຍຫາຍ (ສ່ວນຫຼາຍເຈົ້າຂອງໂຄງການ).

ບ້ານຜາທຸງເປັນພື້ນທີ່ຮາບພຽງມີທົ່ງນາອ້ອມຮອບບ້ານ, ມີຫ້ວຍຮ່ອງຄອງບຶງອຸດົມສົມບູນ, ພູຜານາໆຊຽວງາມໄປດ້ວຍປ່າໄມ້. ໄກອອກໄປໄດ້ຍິນສຽງທະນີຮ້ອງມາໜ້າອອນຊອນ. ປະຊາຊົນພາຍໃນບ້ານສ່ວນຫຼາຍມີອາຊີບເຮັດນາ, ຫາປາຕາມສາຍຫ້ວຍທຳມະຊາດ ແລະ ລ່າສັດເປັນອາຫານ. ມື້ຄ່ຳຍາມເຊົ້າຕື່ນມາ, ໄດ້ຍິນສຽງໄກ່ປ່າຂັນແຄມບ້ານປະຊາຊົນຕື່ນມາກໍມີຄົນແຈ້ງມາວ່າ ບ້ານ ຜາທຸງນີ້ເປັນພື້ນທີ່ ຕອນໃຕ້ສຸດຂອງການກໍ່ສ້າງແລວຄອງສົ່ງ. ເຮັດໃຫ້ບ້ານ ຜາທຸງ ທີ່ສະຫງົບງຽບແຕ່ຂ່ຳຄວນໄປດ້ວຍສຽງຮ້ອງຂອງສັດສານາໆສິ່ງກຳລັງຖືກປ່ຽນແທນໄປດ້ວຍສຽງຮ້ອງຄວນຄາງຂອງລົດກົນຈັກໜັກ, ຂຸດດິນ,ກົນໄມ້, ໃນບໍລິເວນພື້ນທີ່ຂອງໂຄງການເຮັດໃຫ້ບ້ານນີ້ກາຍເປັນບ້ານໜຶ່ງທີ່ນອນຢູ່ໃນເຂດເປົ້າໝາຍຂອງໂຄງການກໍ່ສ້າງຕ່າງໆ. ໃນນັ້ນ, ຄອງສົ່ງນ້ຳກໍເປັນກິດຈະກຳໜຶ່ງທີ່ຈະຕ້ອງໄດ້ເຮັດຜ່ານດິນດອນຕອນຫຍ້າຂອງປະຊາຊົນເປັນຫຍ່ານໆ. ທ.ບຸນ ກໍເປັນຄົນໜຶ່ງທີ່ກຳເນີດ ແລະ ໃຊ້ຊີວິດຄອບຄົວຢູ່ບ້ານຜາທຸງ ແບບຮຽບງ່າຍມາຕະຫຼອດ ເຊັ່ນກັນກັບຄົນອື່ນໆ. ລາວເປັນຄົນທີ່ໃຈດີເຂົ້າກັບຄົນອື່ນພາຍໃນບ້ານໄດ້ດີ. ລາວເປັນຄົນດຸໝັ່ນ, ສັບຊ່າວນາໄດ້ໜຶ່ງຕອນ ແລະ ໄດ້ຮັບຈາກມູນມໍລະດົກອີກໜຶ່ງຕອນ, ລວມເປັນ 2 ຕອນດັ່ງຮູບສະແດງລຸ່ມນີ້.

1 ອີງຕາມມາດຕາ 12 ຂອງດຳລັດເລກທີ 192/ນຍ, ລົງວັນທີ ກ່ຽວກັບການທົດແທນຄ່າເສຍຫາຍ ແລະ ການຍົກຍ້າຍປະຊາຊົນອອກຈາກໂຄງການພັດທະນາ




ຮູບສະແດງ ດິນນາທີ່ຖືກກະທົບ ແລະ ຄວາມຂັດແຍ່ງຂອງ ທ. ບຸນ

ດິນນາທັງ 2 ຕອນນີ້ເປັນແຫຼ່ງທຳການຜະລິດລ້ຽງຊີບພຽງຢ່າງດຽວຂອງ ທ.ບຸນ ກໍຖືກປ່ຽນແປງຍ້ອນການຖົມດິນຖາວອນ ແລະ ນ້ຳຖ້ວມທີ່ເປັນຜົນສະທ້ອນ ຈາກກິດຈະການກໍ່ສ້າງຄອງປ່ອຍນ້ຳພາຍຫຼັງທີ່ປັ່ນໄຟຟ້າແລ້ວເພື່ອລະບາຍອອກສູ່ນ້ຳເຊບັ້ງໄຟ. ເຮັດໃຫ້ ທ.ບຸນ ມີຄວາມບໍ່ພໍໃຈທີ່ສູນເສຍເນື້ອທີ່ທຳການຜະລິດ.

ການຂຽນກໍລະນີສຶກສານີ້ກໍເພື່ອສຶກສາເຖິງຂັ້ນຕອນທີ່ດຳເນີນການປະຊາສຳພັນ, ການປະສານງານກ່ອນກໍ່ສ້າງທີ່ເປັນສອງຫວ່າງຂອງຂໍ້ມູນ ແລະ ກາຍເປັນສາຍເຫດຂອງຄວາມບໍ່ພໍໃຈ.

ສຸດທ້າຍ, ກໍນຳໄປສູ່ຄວາມຂັດແຍ່ງລະຫວ່າງປະຊາຊົນ ແລະ ຜູ້ພັດທະນາໂຄງການ. ນອກນີ້ຍັງໄດ້ສຶກສາບົດບາດຂອງການຊົດເຊີຍຄ່າເສຍຫາຍຕໍ່ເນື້ອທີ່ທຳການຜະລິດຂອງປະຊາຊົນທີ່ມີອິດທິພົນຊ່ອຍໃນການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວລາຍລະອຽດຂອງສາຍເຫດຄວາມຂັດແຍ່ງກໍລະນີນີ້ໄດ້ອະທິບາຍໃນຫົວຂໍ້ຕໍ່ໄປນີ້:

# ສາລະບານ


| | |
|---|---|
| ບົດນຳ | I |
| ສາລະບານ | III |
| ຄວາມເປັນມາຂອງຂໍ້ຂັດແຍ່ງ | 1 |
| ວິເຄາະສາຍເຫດ (ບັດໃຈເລິກໄກສຸດ) | 3 |
| ນິຕິກຳທີ່ກ່ຽວຂ້ອງ | 3 |
| ສະຫຼຸບ ແລະ ຖອດຖອນບົດຮຽນ | 3 |
| ຄຳຖາມ | 4 |
| ແຫຼ່ງຂໍ້ມູນອ້າງອີງ | 4 |

# 1. ຄວາມເປັນມາຂອງຂໍ້ຂັດແຍ່ງ.

ກ່ອນຈະດຳເນີນກິດຈະກຳໂຄງການໃດໜຶ່ງ. ທາງໜ່ວຍງານທີ່ດິນຂອງໂຄງການນ້ຳເທີນ 2 ຈະລົງພື້ນທີ່ ເພື່ອສຶກສາວ່າ ຈະມີຜົນກະທົບຫຍັງຕໍ່ອັນໃດ, ຜົນກະທົບນັ້ນໃຫຍ່ນ້ອຍສ່ຳໃດ ມັນສາມາດຫຼີກລ້ຽງ ຫຼື ວາງແນວທາງຫຼຸດຜ່ອນໄດ້ແນວໃດ ໂດຍການສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂອງລັດ ຊຶ່ງປະກອບມີຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ແລະ ປະຊາຊົນຜູ້ຖືກຜົນກະທົບເຂົ້າຮ່ວມນຳ.

ສຳລັບໃນກໍລະນີດິນນາຕອນທີ 1 ທີ່ມີເນື້ອທີ່ 3.9 ເຮັກຕາ ແລະ ຕອນທີ 2 ມີເນື້ອທີ່ 4 ເຮັກຕາ ຂອງ ທ.ບຸນ ນີ້, ເວລາທີ່ໜ່ວຍງານທີ່ດິນໂຄງການລົງສຳຫຼວດຜົນກະທົບນັ້ນ ໄດ້ໄປແຕ້ມແຜນວາດເຂດທີ່ຖືກຖົມດິນແທ້ພຽງ ແຕ່ໃນຕອນທີ 1 ເນື້ອທີ່ 2.9 ເຮັກຕາ. ເທົ່ານັ້ນ, ທີ່ຈະຮັບຄ່າຊົດເຊີຍເພາະລາວຍັງມີດິນນາເຫຼືອເພື່ອທຳການຜະລິດໃນຕອນທີ 1 ນີ້ ຢູ່ 1 ເຮັກຕາ. ສ່ວນຕອນທີ 2 ບໍ່ໄດ້ແຕ້ມແຜນວາດວ່າຖືກຜົນກະທົບ. ຫຼັງຈາກທີ່ໄດ້ ສຳຫຼວດຮ່ວມກັນແລ້ວ, ໜ່ວຍງານທີ່ດິນໂຄງການກໍເປີດກອງປະຊຸມຊີ້ແຈງຮ່ວມກັບຜູ້ທີ່ໄດ້ຜົນກະທົບເພື່ອໃຫ້ຜູ້ທີ່ຖືກຜົນກະທົບໄດ້ຮັບຟັງ ແລະ ປຶກສາຫາລືກັນ. ມື້ທີ່ເປີດກອງປະຊຸມນັ້ນ ທ. ບຸນມາ ກໍ່ໄດ້ເຂົ້າຮ່ວມເຊັ່ນກັນກັບຜູ້ທີ່ຖືກຜົນກະທົບຄົນອື່ນໆ ປະມານ 30 ຄົນ.ບັນຍາກາດຂອງກອງປະຊຸມມີຜູ້ເຖົ້າ, ຜູ້ແກ່ ແມ່ມານ ແລະ ເດັກນ້ອຍ ຮ້ອງແຊວໆ. ທ.ບຸນມາ ເລີຍບໍ່ຮູ້ວ່າ ດິນນາຕົນເອງໄດ້ຖືກຂຶ້ນແຜນຊົດເຊີຍພຽງ 2.9 ເຮັກຕາ ເທົ່ານັ້ນ. ແນວໃດກໍຕາມ, ຈາກກອງປະຊຸມມື້ນັ້ນເຮັດໃຫ້ລາວຮູ້ວ່າ ຕົນມີສິດຮ້ອງທຸກຫາໂຄງການໄດ້ຖ້າຫາກວ່າມີອັນໃດບໍ່ທັນພໍໃຈ.

ນັບຈາກວັນທີ່ໄດ້ເປີດກອງປະຊຸມຊີ້ແຈງຜົນກະທົບຂອງໂຄງການກໍ່ສ້າງຄອງປ່ອຍນ້ຳ ຈົນຮອດມື້ທີ່ຈະໄດ້ຮັບການຊົດເຊີຍ, ທ.ບຸນມາ ເຂົ້າໃຈວ່າ ຕົນເອງຈະໄດ້ຮັບຄ່າຊົດເຊີຍສຳລັບເນື້ອທີ່ນາທັງໝົດ. ຈົນຮອດມື້ໄປຮັບຄ່າຊົດເຊີຍຕາມການນັດໝາຍ, ລາວກໍແຕ່ງໂຕດີດ້ວຍຄວາມຍິ້ມແຍ້ມແຈ່ມໃສໄປຮ່ວມກອງປະຊຸມ ຫວັງຈະໄດ້ເງິນກ້ອນໃຫຍ່ໄປລົງທຶນປັບປຸງຊີວິດການເປັນຢູ່ດ້ວຍອາຊີບອື່ນປ່ຽນແທນ. ຄວາມຫວັງຂອງ ທ.ບຸນມາ ຫຼຸດວູບລົງ, ເມື່ອລາວຮູ້ວ່າ ຕົນໄດ້ຮັບຄ່າຊົດເຊີຍໃນການສູນເສຍດິນນາຕອນທີ 1 ພຽງ 2.9 ເຮັກຕາ. ເທົ່ານັ້ນ. ທ.ບຸນມາ ຄິດນ້ອຍໃຈຄິດໃຫຍ່ຈະເຮັດແນວໃດ, ເພາະວ່າດິນຂອງຕົນເອງນັ້ນຕອນທີ 1 ນັ້ນ ມີທັງໝົດ 3.9 ເຮັກຕາ. ເປັນຫຍັງຈຶ່ງໄດ້ຮັບຄ່າຊົດເຊີຍພຽງ 2.9 ເຮັກຕາ. ເທົ່ານັ້ນ. ຕົນຈຶ່ງໄດ້ປຶກສາກັບເພື່ອນບ້ານຄົນອື່ນໆ ຊຶ່ງກໍ່ເປັນລັກສະນະດຽວກັນ. ເມື່ອຄົນອື່ນຕັດສິນໃຈຂຽນຄຳຮ້ອງທຸກ, ຕົນກໍຕັດສິນໃຈຂຽນຄຳຮ້ອງທຸກຂໍຄ່າຊົດເຊີຍຈາກການສູນເສຍດິນນາເພີ່ມອີກເຊັ່ນກັນ. ແລ້ວກໍສົ່ງໄປຫາໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

ຈາກນັ້ນ, ໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານກໍສົ່ງຄຳຮ້ອງທຸກຂອງ ທ. ບຸນ ແລະ ຂອງຄົນອື່ນຫາໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງ, ໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງກວດກາພ້ອມທັງມີຄຳເຫັນ ແລ້ວກໍສົ່ງຕໍ່ໄປຍັງໜ່ວຍງານທີ່ດິນຂອງໂຄງການເພື່ອຄົ້ນຄວ້າພິຈະລະນາ. ເພື່ອປະກອບຂໍ້ມູນໃນສຳນວນການພິຈາລະນາຄຳສະເໜີຂອງລາວນັ້ນ, ໜ່ວຍງານທີ່ດິນຂອງໂຄງການຈຶ່ງລົງເກັບກຳຂໍ້ມູນຕົວຈິງຢູ່ພາກສະໜາມ ໂດຍມີ ທ. ບຸນມາ ຜູ້ຮ້ອງທຸກ, ນາຍບ້ານ ແລະ ໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານເຂົ້າຮ່ວມ. ໃນຄັ້ງນີ້, ທ.ບຸນມາ ໄດ້ນຳພາຄະນະໄປກວດກາດິນນາຂອງຕົນທັງສອງບ່ອນເລີຍ. ທາງຄະນະກວດກາສະຖານທີ່ ເຫັນວ່າ ດິນນາຕອນທີ 1 ຂອງ ທ.ບຸນມາ ນີ້ ຖືກຖົມພຽງແຕ່ 2.9 ເຮັກຕາ. ເທົ່ານັ້ນ, ທາງໂຄງການຈະບໍ່ຂະຫຍາຍເຂດຖົມດິນອອກໄປອີກ. ເນື້ອທີ່ນາສ່ວນທີ່ຍັງເຫຼືອ 1 ເຮັກຕາ. ຍັງຄົງເປັນຂອງ ທ. ບຸນມາ ຄືເກົ່າ ແລະ ຈະບໍ່ຊົດເຊີຍລາວ. ທ. ບຸນມາ ຈຶ່ງເຂົ້າໃຈແຈ້ງດີໃນຄັ້ງນີ້. ແນວໃດກໍຕາມ, ທາງຄະນະກວດກາ ເຫັນວ່າ ດິນນາຕອນທີ 2 ເນື້ອທີ່ 4 ເຮັກຕາ. ໄດ້ຖືກນ້ຳຖ້ວມຜົນຜະລິດ, ທາງໜ່ວຍງານທີ່ດິນ

# ແຜນທີ່ຂອບເຂດແຂວງຄໍາມ່ວນ




ພື້ນທີ່ກໍລະນີສຶກສາ

ເມືອງຍົມມະລາດ, ແຂວງຄໍາມ່ວນ



ໂຄງການ ເຫັນວ່າ ລາວຄວນຈະໄດ້ຮັບຄ່າຊົດເຊີຍ ຈຶ່ງແນະນຳໃຫ້ລາວຂຽນຄຳຮ້ອງທຸກຫາໜ່ວຍງານທີ່ດິນໂຄງການອີກສະບັບໜຶ່ງ. ຫຼັງຈາກນັ້ນ, ຈຶ່ງພ້ອມກັນຈັດຕັ້ງກອງປະຊຸມໄກ່ເກ່ຍຂໍ້ຂັດແຍ່ງຂັ້ນເມືອງຂຶ້ນອີກຮອບໜຶ່ງ ເພື່ອຄົ້ນຄວ້າພິຈາລະນາຄຳຮ້ອງທຸກຂອງປະຊາຊົນ ແລະ ຊີ້ແຈງໃຫ້ເຂົາເຈົ້າເຂົ້າໃຈ. ຄັ້ງນີ້, ທ.ບຸນກໍໄດ້ເຂົ້າຮ່ວມດ້ວຍຕົນເອງ ແລະ ໄດ້ຮັບການອະທິບາຍຢ່າງລະອຽດ ລາວຈຶ່ງເຂົ້າໃຈ ແລະ ພໍໃຈຕໍ່ມູນຄ່າທີ່ຕົນເອງຈະໄດ້ຮັບຊົດເຊີຍຄ່າເສຍຫາຍທັງໝົດ.

## 2. ວິເຄາະສາຍເຫດ (ປັດໃຈເລິກໄກສຸດ)

ທ. ບຸນມາ ຮັບຂໍ້ມູນບໍ່ແຈ້ງ, ເພາະເວລາທີ່ໜ່ວຍງານໄກ່ເກ່ຍລົງມາເຜີຍແຜ່ເປີດກອງປະຊຸມຊີ້ແຈງກ່ຽວກັບໂຄງການ, ຜົນກະທົບຂອງໂຄງການ. ກ່ຽວກັບສິດ ແລະ ພັນທະຂອງຜູ້ເສຍຫາຍພາຍໃນໂຄງການ. ຂອງຜູ້ຖືກກະທົບຢູ່ຂັ້ນບ້ານນັ້ນ. ກອງປະຊຸມມີຫຼາຍຄົນໂພດ ເຮັດໃຫ້ບັນຍາກາດນອງນັນ ຊ້ຳບໍ່ໜຳເປັນການຊີ້ແຈງແບບລວມໆ, ຈຶ່ງເຮັດໃຫ້ລາວຮັບຂໍ້ມູນບໍ່ເຕັມສ່ວນ. ທຸກຄົນຄິດວ່າ ຕົນເອງເຂົ້າໃຈຖືກຕ້ອງຄືຕົນເອງຄິດໃນໃຈ, ຈຶ່ງຕົບມືເປັນເອກະພາບນຳ. ໃນຕົວຈິງ, ສິ່ງທີ່ລາວເຂົ້າໃຈນັ້ນມັນບໍ່ຄືກັບສິ່ງທີ່ທາງໂຄງການເຂົ້າໃຈ. ເຮັດໃຫ້ເກີດມີຂໍ້ຂັດແຍ່ງຂຶ້ນ, ລາວຈຶ່ງໄດ້ເຮັດຄຳຮ້ອງທຸກຂຶ້ນ.

## 3. ນິຕິກຳທີ່ກ່ຽວຂ້ອງ.

ດັ່ງທີ່ລະບຸໄວ້ໃນຂໍ້ 2 ມາດຕາ 12 ຂອງດຳລັດເລກທີ 192/ນຍ, ລົງວັນທີ 07 ກໍລະກົດ 2005 ພາກສ່ວນບໍລິສັດຕ້ອງໂຄສະນາເຜີຍແຜ່ກ່ຽວກັບຂໍ້ມູນຂ່າວສານກ່ຽວກັບຈຸດປະສົງຂອງໂຄງການ ຮູບແບບການທົດແທນການເສຍຫາຍ ແລະ ອື່ນໆ ທີ່ເກີດຈາກເຮັດກິດຈະກຳຂອງໂຄງການ ຊຶ່ງຖືເປັນພາກສ່ວນໜຶ່ງຂອງຂະບວນການຍົກຍ້າຍຈັດສັນ ດ້ວຍການຈັດກອງປະຊຸມຮ່ວມກັບປະຊາຊົນ ແລະ ວິທີການອື່ນໆ ເພື່ອແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນຢູ່ຂັ້ນແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງມະຫາຊົນພ້ອມທັງປະຊາຊົນຜູ້ທີ່ຖືກຜົນກະທົບຈາກໂຄງການ ແລະ ຜູ້ກ່ຽວຂ້ອງຊາບຕາມຄວາມຈຳເປັນ. ໝາຍຄວາມວ່າ, ບໍ່ວ່າ ຈະເຮັດດ້ວຍເຄື່ອງມື ຫຼື ວິທີໃດທີ່ສອດຄ່ອງດ້ວຍກົດໝາຍ. ຜູ້ພັດທະນາໂຄງການຕ້ອງເຮັດໃຫ້ປະຊາຊົນຜູ້ທີ່ຖືກຜົນກະທົບຮັບຮູ້ ແລະ ເຂົ້າໃຈກ່ຽວກັບຜົນທີ່ຈະເກີດຂຶ້ນກັບໂຄງການໃຫ້ຈົບໝົດ.

## 4. ສະຫລຸບ ແລະ ຖອດຖອນບົດຮຽນ.

ການສື່ສານ ຫຼື ນຳສະເໜີຂໍ້ມູນໃນກອງປະຊຸມຂອງພະນັກງານສາມາດເຮັດໃຫ້ເກີດມີຄວາມເຂົ້າໃຈຜິດ ຫຼື ບໍ່ເຂົ້າໃຈເລີຍ. ມັນສາມາດນຳໄປສູ່ຄວາມຂັດແຍ່ງໃນຮອບໃໝ່ໄດ້. ສະນັ້ນ, ຕ້ອງໄດ້ລະວັງໃນການສື່ສານກັບປະຊາຊົນ. ພະນັກງານປະຊາສຳພັນ, ຕ້ອງມີຄວາມຮັບຜິດຊອບຢ່າງເຕັມສ່ວນໃນການສ້າງຄວາມເຂົ້າໃຈຢ່າງຈະແຈ້ງບໍ່ແມ່ນຈະເຮັດຕາມມີຕາມເກີດ ຫຼື ເຮັດພໍແລ້ວມືເທົ່ານັ້ນ. ຄວນຈະສຶກສາກ່ຽວກັບຂັ້ນຕອນ, ແລະ ເຄື່ອງມືຄວາມເຂົ້າໃຈຂອງເຂົາເຈົ້າ, ໃນການສົ່ງຂໍ້ມູນໃຫ້ປະຊາຊົນໃນທ້ອງຖິ່ນ.

ປະຊາຊົນຜູ້ເສຍຫາຍພາຍໃນໂຄງການຄວນເອົາໃຈໃສ່ໃນການຮັບເອົາຂໍ້ມູນ. ພາກສ່ວນທີ່ກ່ຽວຂ້ອງຄວນຈະສຶກສາຂໍ້ມູນການເສຍຫາຍ ແລະ ເຮັດບົດວິພາກຂອງໂຄງການໃຫ້ລະອຽດ.

## ຄຳຖາມ.

1. ທ່ານວ່າ ວຽກງານປະຊາສຳພັນ ເຜີຍແຜ່ກ່ຽວກັບຂໍ້ມູນຂ່າວສານການກໍ່ສ້າງໂຄງການໄດ້ດີແລ້ວບໍ?
2. ປະຊາຊົນພາຍໃນເຂດໂຄງການເຂົ້າໃຈສິດ ແລະ ພັນທະຂອງຕົນເອງດີແລ້ວບໍ?
3. ທ່ານວ່າ ທຸກບັນຫາສົມຄວນແລ້ວບໍທີ່ຈະຮັບການພິຈາລະນາແກ້ໄຂຈ່າຍຄ່າຊົດເຊີຍ?
4. ມູນຄ່າການຊົດເຊີຍສົມເຫດສົມຜົນແລ້ວບໍ?

## ແຫຼ່ງຂໍ້ມູນອ້າງອີງ.


1. ເອກະສານບົດບັນທຶກການໄກ່ເກ່ຍຂັ້ນບ້ານຜາທຸງ ວັນທີ 8/5/2008.
2. ເອກະສານບົດບັນທຶກການໄກ່ເກ່ຍຂັ້ນເມືອງຍົມມະລາດ ວັນທີ 12/5/2009.
3. ຂໍ້ມູນຈາກນາຍບ້ານ ແລະ ພະນັກງານໄກ່ເກ່ຍຂັ້ນເມືອງ.
4. ດຳລັດ ເລກທີ 192/ນຍ, ລົງວັນທີ.

Rights-LINK

# ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທໍາມະຊາດ

## *ເປົ້າໝາຍຂອງໂຄງການ*

ເພີ່ມທະວີການນໍາໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ຢູ່ໃນ ສປປ ລາວ ໃຫ້ຍືນຍົງ ໂດຍການສົ່ງເສີມການເຂົ້າເຖິງຂໍ້ມູນຂ່າວສານ, ສົ່ງເສີມການມີສ່ວນຮ່ວມ ແລະ ຍົກລະດັບຄວາມສາມາດໃຫ້ແກ່ຄູ່ຮ່ວມງານ.

## *ຈຸດປະສົງຂອງໂຄງການ*

ເພື່ອສົ່ງເສີມທຸກພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມຮັບຮູ້, ຄວາມສາມາດ ແລະ ມີສ່ວນຮ່ວມໃນການປຶກສາ ຫາລື ກ່ຽວກັບຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທໍາມະຊາດ ເພື່ອໃຫ້ປະຊາຊົນໃນທ້ອງຖິ່ນສາມາດເຂົ້າໃຈໄດ້ ກ່ຽວກັບສິດໃນການນໍາໃຊ້ ແລະ ຄຸ້ມຄອງທີ່ດິນ ແລະ ຊັບພະຍາກອນທໍາມະຊາດ.

## *ໂຄງການດໍາເນີນງານໂດຍອີງຕາມຫຼັກການດັ່ງຕໍ່ລົງໄປນີ້*

- ຄວາມເປັນເຈົ້າການຂອງຄົນລາວ
- ການຍອມຮັບຂໍ້ຕົກລົງວ່າດ້ວຍບົດບາດຍິງ-ຊາຍ ກ່ຽວກັບປະເດັນທີ່ດິນ
- ການຍອມຮັບຂໍ້ຕົກລົງວ່າດ້ວຍຄວາມເປັນຊົນຊາດຊົນເຜົ່າ ແລະ ປະເພນີ ວັດທະນະທໍາທ້ອງຖິ່ນ
- ຄວາມເປັນກາງ
- ການເຂົ້າເຖິງຂໍ້ມູນຂ່າວສານຢ່າງເປີດກວ້າງ
- ເຮັດໃຫ້ມີຄວາມຫຼາກຫຼາຍ
- ການມີສ່ວນຮ່ວມ

ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ
ຊັບພະຍາກອນທໍາມະຊາດ
ອົງການບ້ານຈຸດສຸມສາກົນ
ຕູ້ ປ.ນ. 4697
ນະຄອນຫຼວງວຽງຈັນ, ສປປ ລາວ
+856 (0)21 312519

ອີເມວ: info@rightslinklao.org
www.rightslinklao.org